ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 3109 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 28/08/18

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງສະຖາບັນພັດທະນາສີມືແຮງງານລາວ - ເກົາຫຼີ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ການຄົ້ນຄວ້ານຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງສະຖາບັນພັດທະນາສີມືແຮງງານ ລາວ-ເກົາຫຼີ ເພື່ອຮັບປະກັນການເຄື່ອນໄຫວວຽກງານຂອງສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ, ຂຽນເປັນຕົວອັກສອນຫຍໍ້ວ່າ: "ສພລກ" ແມ່ນສະຖາບັນວິຊາການຂອງລັດ, ມີຖານະເທົ່າກົມ ສັງກັດໂຄງປະກອບການຈັດຕັ້ງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະນຳກະຊວງໃນການຄົ້ນຄວ້າວິທະຍາສາດການພັດທະນາສີມືແຮງງານ, ສ້າງມາດຕະຖານສີມືແຮງງານ, ຝຶກສີມື, ທົດສອບອອກໃບຢັ້ງຢືນສີມືແຮງງານ ແລະ ຈັດການແຂ່ງຂັນສີມືແຮງງານ, ເຮັດໜ້າທີ່ບຳລຸງ-ກໍ່ສ້າງຜູ້ບໍລິຫານ, ຄູພັດທະນາສີມືແຮງງານ, ພັດທະນາຫຼັກສູດ, ປຶ້ມຕຳລາ, ສື່ການຝຶກ ແລະ ຄຸ້ມຄອງສູນພັດທະນາສີມືແຮງງານຂັ້ນແຂວງ, ນະຄອນຫຼວງ ທາງດ້ານວິຊາການ.

# ໝວດທີ 2
# ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຜັນຂະຫຍາຍແນວທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ, ກົດໝາຍ, ດຳລັດ ແລະ ລະບຽບຫຼັກການກ່ຽວກັບການພັດທະນາສີມືແຮງງານ;
2. ສ້າງແຜນການ, ແຜນງານ, ໂຄງການ ແລະ ແຜນງົບປະມານເຄື່ອນໄຫວວຽກງານຂອງສະຖາບັນ;
3. ສະເໜີແຜນບຳລຸງ, ກໍ່ສ້າງ, ບັນຈຸສັບຊ້ອນ, ຄຸ້ມຄອງພະນັກງານ ຄູ-ອາຈານ ແລະ ຜູ້ເຂົ້າຝຶກ;
4. ສ້າງລະບຽບການຄຸ້ມຄອງ ແລະ ລະບຽບການຕ່າງໆກ່ຽວກັບການພັດທະນາສີມືແຮງງານຂອງສະຖາບັນ;
5. ຄຸ້ມຄອງຊັບສິນ, ອາຄານສະຖານທີ່, ພາຫະນະ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ຕາມລະບຽບຫຼັກການ;
6. ຄົ້ນຄວ້າວິທະຍາສາດການພັດທະນາສີມືແຮງງານ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ - ສັງຄົມ ໃນແຕ່ລະໄລຍະ, ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ;
7. ພັດທະນາມາດຕະຖານສີມືແຮງງານຕາມສາຂາອາຊີບຕ່າງໆ ໃຫ້ກາຍເປັນມາດຕະຖານສີມືແຮງງານແຫ່ງຊາດ, ຈັດຕັ້ງການຝຶກສີມື, ດຳເນີນການທົດສອບ ແລະ ອອກໃບປະກາສະນີຍະບັດ, ໃບຢັ້ງຢືນສີມືແຮງງານ;
8. ສ້າງ ແລະ ພັດທະນາຫຼັກສູດ, ປື້ມຕຳລາ, ສື່ການຝຶກ, ວັດສະດຸ - ອຸປະກອນການຝຶກຂອງສະຖາບັນເພື່ອຮັບປະກັນໃຫ້ແກ່ວຽກງານພັດທະນາສີມືແຮງງານໃຫ້ມີຄຸນນະພາບ;
9. ຂຶ້ນແຜນບຳລຸງ-ກໍ່ສ້າງຜູ້ບໍລິຫານ, ຄູພັດທະນາສີມືແຮງງານ, ຫຼັກສູດ, ປື້ມຕຳລາ, ວັດຖຸ-ອຸປະກອນ ໃຫ້ແກ່ສູນພັດທະນາສີມືແຮງງານປະຈຳແຂວງ, ນະຄອນຫຼວງ;
10. ຈັດຕັ້ງການແຂ່ງຂັນສີມືແຮງງານ, ລະດັບສະຖາບັນ, ລະດັບຊາດ ແລະ ລະດັບອາຊຽນ ຕາມການມອບໝາຍຂອງຂັ້ນເທິງ.
11. ປະສານງານ ແລະ ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ກ່ຽວກັບວຽກງານພັດທະນາສີມືແຮງງານ;
12. ປຶກສາຫາລື ຂໍຄຳຄິດຄຳເຫັນ ໃນດ້ານວິຊາການຈາກສະພາທີ່ປຶກສາຂອງສະຖາບັນເປັນປົກກະຕິ;
13. ເກັບກຳ, ເຜີຍແຜ່ຂໍ້ມູນຂ່າວສານ ແລະ ແນະນຳວິຊາຊີບກ່ຽວກັບການພັດທະນາສີມືແຮງງານຂອງສະຖາບັນ;
14. ປະຕິບັດນະໂຍບາຍປະຢັດ, ຕ້ານການໃຊ້ຈ່າຍຟຸມເຟືອຍ, ຕ້ານພະຍາດອາດຍາສິດ, ຕ້ານການສໍ້ລາດບັງຫຼວງ, ການໃຫ້ ແລະ ຮັບສິນບົນທຸກຮູບແບບ;
15. ສະຫຼຸບປະເມີນຜົນລາຍງານການເຄື່ອນໄຫວຂອງສະຖາບັນໃຫ້ກົມວິຊາການກ່ຽວຂ້ອງ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມໃນແຕ່ລະໄລຍະ;
16. ປະຕິບັດໜ້າທີ່ວຽກງານອື່ນຕາມການມອບໝາຍຂອງຂັ້ນເທິງ;